ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 04100 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 03 AUG 2018

## ຄໍາແນະນໍາເພີ່ມເຕີມ

**ເຖິງ :** ພະແນກອ້ອມຂ້າງກົມພາສີ,ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການແກ້ໄຂຄະດີພາຫະນະລັກລອບນໍາເຂົ້າໜີພາສີ.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ,ລົງວັນທີ 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມພາສີ;
- ອີງຕາມ ແຈ້ງການແນະນໍາ ຂອງກະຊວງການເງິນ ສະບັບເລກທີ 1984/ກງ, ລົງວັນທີ 27 ມິຖຸນາ 2018 ກ່ຽວກັບການແກ້ໄຂຄະດີລົດລັກລອບນໍາເຂົ້າໜີພາສີ

ເພື່ອຮັບປະກັນໃນການຈັດຕັ້ງຜັນຂະຫຍາຍ ແຈ້ງການແນະນໍາ ສະບັບເລກທີ 1984/ກງ, ລົງວັນທີ 27 ມິຖຸນາ 2018 ກ່ຽວກັບການແກ້ໄຂຄະດີພາຫະນະລັກລອບນໍາເຂົ້າໜີພາສີ ໃຫ້ມີປະສິດທິຜົນຕາມລະດັບຄາດໝາຍ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

### ກົມພາສີ ອອກຄໍາແນະນໍາເພີ່ມເຕີມ ດັ່ງນີ້:

1. ມອບໃຫ້ບັນດາພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ ເອົາໃຈໃສ່ຈັດຕັ້ງປະຕິບັດແຈ້ງການແນະນໍາ ສະບັບເລກທີ 1984/ກງ, ລົງວັນທີ 27 ມິຖຸນາ 2018 .
2. ການຫັກຄ່າຫຼູ້ຍຫ້ຽນ ພາຫະນະປະເພດຕ່າງໆ ທີ່ລັກລອບນໍາເຂົ້າໜີພາສີ ແມ່ນອະນຸຍາດໃຫ້ຫັກລົບ ຕາມຕາຕະລາງ 7 ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ( ປະຕິບັດຕາມຫຼັກການຄະນິດສາດ ).

- ສໍາລັບປີຜະລິດ, ປະເທດຜະລິດ, ຄວາມແຮງ, ເລກຈັກ, ເລກຖັງ ແມ່ນຕ້ອງໄດ້ມີການຢັ້ງຢືນ ເປັນທາງການ ຈາກຂະແໜງໂຍທາທິການ ແລະ ຂົນສົ່ງ.

3. ວິທີການຄິດໄລ່ຄ່າ ພາສີ-ອາກອນ ແລະ ມາດຕະການປັບໃໝ ໃຫ້ປະຕິບັດດັ່ງນີ້:

3.1 ຜູ້ຄອບຄອງພາຫະນະລັກລອບນໍາເຂົ້າໜີພາສີ ທີ່ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ພາສີ ແລະ ຈິງໃຈມາແຈ້ງເສຍພາສີ-ອາກອນ, ຈະຖືກປັບໃໝ ( 30% ຂອງມູນຄ່າ ) ຕາມມາດຕາ 89 ຂອງກົດໝາຍວ່າດ້ວຍພາສີ.

3.2 ຜູ້ທີ່ຄອບຄອງພາຫະນະລັກລອບນຳເຂົ້າໜີພາສີ ທີ່ບໍ່ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ພາສີ, ຖ້າຖືກເຈົ້າໜ້າທີ່ຈັບກຸມ ຕ້ອງເສຍພາສີ-ອາກອນ ພ້ອມທັງປັບໄໝ ( 70% ຂອງມູນຄ່າ ) ຕາມມາດຕາ 90 ຂອງກົດໝາຍວ່າດ້ວຍພາສີ.

3.3 ລາຍລະອຽດອີງຕາມຕົວຢ່າງຕາຕະລາງການຄິດໄລ່ຂອງ ພະແນກຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ ຄັດຕິດມາພ້ອມນີ້.

4. ມອບໃຫ້ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈຳແຂວງ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຢ່າງມີຫຼັກການ ໃນການຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

5. ການຈັດຕັ້ງປະຕິບັດ ຫາກພົບຂໍ້ຫຍຸ້ງຍາກ ຫຼື ມີບັນຫາໃດບໍ່ສອດຄ່ອງ ໃຫ້ລາຍງານເປັນລາຍລັກອັກສອນໃຫ້ກົມພາສີ, ພະແນກຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ ເພື່ອຮັບຊາບ ແລະ ແກ້ໄຂໃຫ້ທັນເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ

ບ່ອນນຳສົ່ງ:

- ພະແນກອ້ອມຂ້າງກົມພາສີ
- ກອງຄຸ້ມຄອງພາສີ
- ກອງກວດກາພາສີປະຈຳແຂວງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມພາສີ

ພະແນກຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ

ເລກທີ : E-0685 /ພຕກ

ນະຄອນຫຼວງວຽງຈັນ, ວັນທີ : 03 AUG 2018

# ຕາຕະລາງຕົວຢ່າງແບບວິທີຄິດໄລ່

# ຄ່າພາສີ-ອາກອນ ແລະ ຄ່າປັບໃໝ ຂອງລົດລັກລອບນຳເຂົ້າໜີພາສີ

| ລ/ດ | ປະເພດລົດ | ຄວາມແຮງ (ຊີຊີ) | ປະເທດຜະລິດ | ປີຜະລິດ | ລາຄາ | ຫັກລົບຄ່າຫຼຸຍຫ້ຽນຕາມຕາຕະລາງ 7 | | ຄ່າພາສີ | | ອກຊ | | ອມພ ອັດຕາ (10%) | ອກລ ອັດຕາ (24%) | ຄ່າປັບໃໝ | | ລວມຄ່າພາສີ-ອາກອນ,ຄ່າປັບໃໝ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | ອາຍຸການນຳໃຊ້ | ມູນຄ່າແຈ້ງ | ອັດຕາ (%) | ມູນຄ່າ | ອັດຕາ (%) | ມູນຄ່າ | | | 30% | 70% | |
| 1 | ລົດຈັກ | 100 | ໄທ | 2013 | 554 | 5 | 277.00 | 40 | 936,300 | 20 | 655,400 | 432,600 | 94,400 | 702,200 | - | 2,820,900 |
| 2 | ລົດຈັກ | 125 | ໄທ | 2014 | 655 | 4 | 379.90 | 40 | 1,284,100 | 30 | 1,348,300 | 642,700 | 40,300 | - | 2,247,200 | 5,662,600 |
| 3 | ລົດຈັກ | 250 | ໄທ | 2015 | 720 | 3 | 475.20 | 40 | 1,606,200 | 40 | 2,248,700 | 865,800 | 188,900 | 1,204,700 | - | 6,114,300 |
| 4 | ລົດເກັງ | 1,300 | ໄທ | 2013 | 6,840 | 5 | 3,765.00 | 40 | 12,725,700 | 30 | 13,362,000 | 6,369,300 | 1,389,700 | - | 22,270,000 | 56,116,700 |
| 5 | ລົດເກັງ | 1,600 | ໄທ | 2015 | 7,000 | 3 | 4,830.00 | 40 | 16,325,400 | 30 | 17,141,700 | 8,170,900 | 1,782,800 | 12,244,100 | - | 55,664,900 |
| 6 | ລົດເກັງ | 2,400 | ຍີ່ປຸ່ນ | 2014 | 13,000 | 4 | 8,060.00 | 40 | 27,242,800 | 40 | 38,140,000 | 14,683,900 | 3,203,800 | - | 47,674,900 | 130,945,400 |
| 7 | ລົດເກັງ | 1.300 | ສປ ຈີນ | 2014 | 1.650 | 4 | 1,023.00 | 40 | 3,457,800 | 30 | 3,630,700 | 1,730,700 | 377,600 | 2,593,400 | - | 11,790,200 |
| 8 | ລົດເກັງ | 1.600 | ສປ ຈີນ | 2013 | 1.870 | 5 | 1,028.50 | 40 | 3,476,400 | 30 | 3,650,200 | 1,740,000 | 379,700 | - | 6,083,600 | 15,329,900 |
| 9 | ລົດກະບະ 2 ປະຕູ 4X4 | 2,500 | ໄທ | 2014 | 7,500 | 4 | 4,350.00 | 30 | 11,027,300 | 10 | 4,778,500 | 5,782,000 | 1,261,600 | 11,027,300 | - | 33,876,700 |
| 10 | ລົດກະບະ 2 ປະຕູເຄິ່ງ ແບບມາດຕະຖານ | 2,800 | ໄທ | 2015 | 8,280 | 3 | 5,464.80 | 30 | 13,853,300 | 10 | 6,003,100 | 7,263,800 | 1,584,900 | - | 32,324,300 | 61,029,400 |

| | | | | | | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| 11 | ລົດກະບະ 2 ປະຕູເຄິ່ງ 4x4 (Samrt cab) | 2,800 | ໄທ | 2015 | 8,280 | 3 | 5,464.80 | 30 | 13,853,300 | 45 | 27,013,900 | 9,575,000 | 2,089,100 | 13,853,300 | - | 66,384,600 |
| 12 | ລົດກະບະ 4 ປະຕູ 4x4 | 2,500 | ໄທ | 2013 | 10,080 | 5 | 5,040.00 | 30 | 12,776,400 | 40 | 22,145,800 | 8,526,200 | 1,860,300 | - | 29,811,600 | 75,120,300 |
| 13 | ລົດກະບະ 4 ປະຕູ 4x4 | 2,800 | ໄທ | 2014 | 12,240 | 4 | 7,099.20 | 30 | 17,996,500 | 45 | 35,093,200 | 12,438,600 | 2,713,900 | 17,996,500 | - | 86,238,700 |
| 14 | ລົດກະບະ 4 ປະຕູ 4x4 | 3,000 | ໄທ | 2015 | 12,240 | 3 | 8,078.40 | 30 | 20,478,800 | 45 | 39,933,600 | 14,154,300 | 3,088,200 | - | 47,783,800 | 125,438,700 |
| 15 | ລົດກະບະ 4 ປະຕູ 4x4 | 2.500 | ສປ ຈີນ | 2012 | 3,979 | 6 | 1,671.18 | 30 | 4,236,500 | 40 | 7,343,200 | 2,827,200 | 616,900 | 4,236,500 | - | 19,260,300 |
| 16 | ລົດກະບະ 4 ປະຕູ 4x4 | 2.800 | ສປ ຈີນ | 2014 | 4,377 | 4 | 2,538.66 | 30 | 6,435,600 | 45 | 12,549,300 | 4,448,100 | 970,500 | - | 15,016,200 | 39,419,700 |
| 17 | ລົດຈີບ | 2,500 | ໄທ | 2013 | 12,240 | 5 | 6,120.00 | 40 | 20,685,600 | 40 | 28,959,900 | 11,149,600 | 2,432,700 | 15,514,200 | - | 78,742,000 |
| 18 | ລົດຈີບ | 3,000 | ຍີ່ປຸ່ນ | 2015 | 16,920 | 3 | 11,167.20 | 40 | 37,745,200 | 45 | 59,448,700 | 21,071,300 | 4,597,400 | - | 66,054,000 | 188,916,600 |
| 19 | ລົດຈີບ | 4,500 | ຍີ່ປຸ່ນ | 2015 | 24,480 | 3 | 16,156.80 | 40 | 54,610,000 | 80 | 152,908,000 | 37,844,800 | 8,257,100 | 40,957,500 | - | 294,577,400 |
| 20 | ລົດຈີບ | 5,700 | ຍີ່ປຸ່ນ | 2015 | 24,480 | 3 | 16,156.80 | 40 | 54,610,000 | 90 | 172,021,500 | 39,947,300 | 8,715,800 | - | 95,567,500 | 370,862,100 |
| 21 | ລົດຕູ້ 7-12 ບ່ອນນັ່ງ | 2.500 | ສປ ຈີນ | 2013 | 2,500 | 5 | 1,375.00 | 20 | 2,323,800 | 40 | 5,577,100 | 2,147,200 | 468,500 | 3,485,700 | - | 14,002,300 |
| 22 | ລົດຕູ້ 13-15 ບ່ອນນັ່ງ | 2.800 | ສປ ຈີນ | 2015 | 3,000 | 3 | 2,070.00 | 20 | 3,498,300 | 45 | 9,445,500 | 3,347,900 | 730,500 | - | 12,244,100 | 29,266,300 |
| 23 | ລົດບັນທຸກ 6 ລໍ້ 1 ໂຕນ | - | ສປ ຈີນ | 2012 | 1,500 | 6 | 840.00 | 20 | 1,419,600 | 10 | 851,800 | 1,030,700 | 224,900 | 2,129,400 | - | 5,656,400 |
| 24 | ລົດບັນທຸກ 6 ລໍ້ 2 ໂຕນ | - | ສປ ຈີນ | 2015 | 3,000 | 3 | 2,220.00 | 20 | 3,751,800 | 10 | 2,251,100 | 2,723,900 | 594,300 | - | 13,131,300 | 22,452,400 |
| 25 | ລົດບັນທຸກ 6 ລໍ້ 5 ໂຕນ | - | ສປ ຈີນ | 2013 | 4,392 | 5 | 2,723.04 | 20 | 4,602,600 | 8 | 2,209,300 | 3,280,800 | 715,800 | 6,903,900 | - | 17,712,400 |
| 26 | ລົດບັນທຸກ 10 ລໍ້ 10 ໂຕນ | - | ສປ ຈີນ | 2014 | 4,676 | 4 | 3,178.68 | 20 | 5,372,000 | 8 | 2,578,600 | 3,829,200 | 835,500 | - | 18,801,900 | 31,417,200 |
| 27 | ລົດບັນທຸກ 10 ລໍ້ 12 ໂຕນ | - | ສປ ຈີນ | 2013 | 5,845 | 5 | 3,623.90 | 20 | 6,124,400 | 8 | 2,939,800 | 4,365,500 | 952,500 | 9,186,600 | - | 23,568,800 |

ອັດຕາອາກອນຊົມໃຊ້ ຕາມແຈ້ງການແນະນຳ ເລກທີ 07481/ກພສ, ລົງວັນທີ 11/07/2016

ຫົວໜ້າພະແນກ ພຕກ

ພະແນກ ຕ້ານ ແລະ ສະກັດກັ້ນ ການລັກລອບພາສີ

ສຸກສະຫວັນ ບົວພາ
Souksavanh BOUAPHA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ:.........1984.........../ກງ
ນະຄອນຫຼວງວຽງຈັນ, ວັນທີ:.27 ມິຖຸນາ 2018

# ແຈ້ງການແນະນຳ
# ກ່ຽວກັບການແກ້ໄຂຄະດີລົດລັກລອບນຳເຂົ້າໜີພາສີ.

---

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 08 ພຶດສະພາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1111/ຫສນຍ.ກຄສ, ລົງວັນທີ 27 ກໍລະກົດ 2017;
- ອີງຕາມ ບົດບັນທຶກກອງປະຊຸມລະຫວ່າງກະຊວງການເງິນ ແລະ ບັນດາຂະແໜງການກ່ຽວຂ້ອງທີ່ກະຊວງການເງິນ, ຄັ້ງວັນທີ 07 ມິຖຸນາ 2018.
- ອີງຕາມ ບົດລາຍງານຂອງກົມພາສີ ສະບັບເລກທີ 03193/ກພສ, ລົງວັນທີ 19 ມິຖຸນາ 2018.

ເພື່ອເປັນການຊຸກຍູ້ ແລະ ແກ້ໄຂປະກົດການຫຍໍ້ທໍ້ກ່ຽວກັບພາຫະນະລັກລອບນຳເຂົ້າໜີພາສີ ໃຫ້ໄດ້ຮັບການແກ້ໄຂຕາມຂັ້ນຕອນຂອງກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ຮັບປະກັນການຈັດເກັບລາຍຮັບເຂົ້າງົບປະມານ ໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ອອກແຈ້ງການແນະນຳ ຄື :

1. ແຈ້ງການສະບັບນີ້ ແນໃສ່ເພື່ອກຳນົດຫລັກການ ໃນການແກ້ໄຂພາຫະນະທີ່ລັກລອບນຳເຂົ້າໜີພາສີ ຢູ່ໃນຂອບເຂດທົ່ວປະເທດ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍພາສີ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ຕາມທີ່ໄດ້ກຳນົດໄວ້ໃນ ແຈ້ງການແນະນຳເພີ່ມເຕີມຂອງກະຊວງການເງິນ ສະບັບເລກທີ 2269/ກງ, ລົງວັນທີ 05 ກໍລະກົດ 2017 ຂໍ້ທີ 2.
2. ການແກ້ໄຂແລະດຳເນີນຄະດີພາຫະນະລັກລອບນຳເຂົ້າໜີພາສີ (ລົດໃຫ່ຍ, ລົດຈັກ) :

- ຜູ້ຄອບຄອງພາຫະນະ ລົດໃຫ່ຍ, ລົດຈັກ (ແຮງມ້າ ບໍ່ເກີນ 250 ຊີຊີ) ທີ່ລັກລອບນຳເຂົ້າໜີພາສີ ຕ້ອງໄດ້ມາແຈ້ງເສຍພາສີ-ອາກອນຕາມລະບຽບການ, ພ້ອມນັ້ນກໍ່ຕ້ອງໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ພາສີ ໃນການສືບສວນສອບສວນກ່ຽວກັບແຫຼ່ງທີ່ມາຂອງລົດດັ່ງກ່າວ, ການດຳເນີນແກ້ໄຂສະສາງຄະດີ ແມ່ນໃຫ້ປະຕິບັດຕາມມາດຕາ 89 ຂອງກົດໝາຍພາສີ (ເສຍພາສີ-ອາກອນ ແລະ ປັບໃໝ 30% ຂອງມູນຄ່າພາຫະນະ);
- ຜູ້ຄອບຄອງພາຫະນະ ລົດໃຫ່ຍ ແລະ ລົດຈັກ (ແຮງມ້າ ບໍ່ເກີນ 250 ຊີຊີ) ທີ່ມີເຈດຕະນາ ຫລົບຫລີກໜີພາສີ, ຖ້າຖືກເຈົ້າໜ້າທີ່ພາສີ ຈັບກຸມ ຫຼື ອົງການລັດກ່ຽວຂ້ອງໄດ້ຈັບກຸມ ແລ້ວມອບໃຫ້ຂະແໜງພາສີເປັນຜູ້ສະສາງຄະດີ ຕ້ອງໄດ້ເສຍພາສີ-ອາກອນ ແລະ ປັບໃໝ ຕາມກົດໝາຍວ່າດ້ວຍພາສີ ມາດຕາ 90 (ເສຍພາສີ-ອາກອນ

ແລະ ປັບໃໝ 70% ຂອງມູນຄ່າພາຫະນະ). ໃນກໍລະນີຜູ້ຄອບຄອງພາຫະນະດັ່ງກ່າວ ຫາກບໍ່ຍິນຍອມ ແມ່ນໃຫ້ດໍາເນີນການຮິບເປັນຂອງລັດ ຕາມກົດໝາຍວ່າດ້ວຍພາສີ ຢ່າງເຂັ້ມງວດ.

3. ມອບໃຫ້ກົມພາສີ ຄິດໄລ່ຄ່າພາສີ-ອາກອນ ແລະ ພັນທະອື່ນ ໃນການຊໍາລະສະສາງຄະດີ ຂອງພາຫະນະລັກລອບນໍາເຂົ້າໜີພາສີ ໂດຍໃຫ້ສ້າງເປັນບັນຊີຄິດໄລ່ລະອຽດຂອງພາຫະນະແຕ່ລະປະເພດ, ຍີ່ຫໍ້, ລຸ້ນ, ປີຜະລິດ ເພື່ອເປັນບ່ອນອີງໃຫ້ບັນດາກອງຄຸ້ມຄອງພາສີ, ກອງກວດກາພາສີປະຈໍາແຂວງ ໃນການຈັດຕັ້ງປະຕິບັດໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ໃນການກໍານົດມູນຄ່າຄິດໄລ່ຄ່າພາສີ-ອາກອນ ແມ່ນໃຫ້ປະຕິບັດຕາມກົດໝາຍພາສີ, ຄື : ພາຫະນະທີ່ຜະລິດແຕ່ປີ 2015 ລົງມາ ແມ່ນໃຫ້ປະຕິບັດຕາມລະບຽບການກໍານົດມູນຄ່າແຈ້ງພາສີ ທີ່ນໍາໃຊ້ໃນໄລຍະດັ່ງກ່າວ, ສ່ວນພາຫະນະທີ່ຜະລິດແຕ່ປີ 2016 ຂຶ້ນໄປ ແມ່ນໃຫ້ປະຕິບັດຕາມລາຄາຊື້-ຂາຍຕົວຈິງ (ຖານຂໍ້ມູນລາຄາໃນລະບົບອາຊີກູດາ) ເພື່ອເປັນພື້ນຖານຄິດໄລ່ໃນການຫັກລົບຄ່າຫຼູ້ຍຫ້ຽນ ຕາມຕະລາງ 7 ຂອງລະບຽບການໂຍທາທິການ ແລະ ຂົນສົ່ງ.

4. ການດໍາເນີນແກ້ໄຂຄະດີພາຫະນະລັກລອບນໍາເຂົ້າໜີພາສີ ແມ່ນມອບໃຫ້ກອງຄຸ້ມຄອງພາສີ ແລະ ກອງກວດກາພາສີປະຈໍາແຂວງ ໂດຍສົມທົບກັບຂະແໜງການກ່ຽວຂ້ອງ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ສ່ວນການຢັ້ງຢືນຂໍ້ມູນກ່ຽວກັບພາຫະນະ ເຊັ່ນ: ສະພາບເຕັກນິກ, ປະເພດ, ຍີ່ຫໍ້, ຄວາມແຮງ, ເລກຈັກ, ເລກຖັງ, ປີຜະລິດ ແລະ ຂໍ້ມູນອື່ນທີ່ຈໍາເປັນຂອງພາຫະນະ ແມ່ນໃຫ້ສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຢັ້ງຢືນ ເພື່ອເປັນເອກະສານປະກອບ ໃນການດໍາເນີນຄະດີທາງພາສີ.

5. ຄ່າປັບໃໝທີ່ໄດ້ຈາກການດໍາເນີນຄະດີ ແມ່ນໃຫ້ຈັດຕັ້ງປະຕິບັດຕາມບົດແນະນໍາຂອງກົມພາສີ ສະບັບເລກທີ 4148/ກພສ ລົງວັນທີ 03/03/2016.

6. ມອບໃຫ້ກົມພາສີ, ພະແນກການເງິນນະຄອນຫຼວງ, ບັນດາແຂວງ ແລະ ຂະແໜງການກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ເອົາໃຈໃສ່ຕິດຕາມຊີ້ນໍາການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ສໍາເລັດຜົນຕາມຄາດໝາຍ, ພ້ອມນັ້ນ ກໍ່ໃຫ້ໂຄສະນາເຜີຍແຜ່ເນື້ອໃນແຈ້ງການສະບັບນີ້ ໃຫ້ທຸກພາກສ່ວນໃນສັງຄົມ ເຊື່ອມຊຶມ ແລະ ເຂົ້າໃຈ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

7. ແຈ້ງການສະບັບນີ້ ມີຜົນສັກສິດ ແລະ ນໍາໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮອງນາຍົກລັດຖະມົນຕີ**
**ລັດຖະມົນຕີກະຊວງການເງິນ**

ສົມດີ ດວງດີ

<u>ບ່ອນນໍາສົ່ງ :</u>

- ນາຍົກລັດຖະມົນຕີ, ຮອງນາຍົກລັດຖະມົນຕີ 01 ສະບັບ (ເພື່ອຊາບ)
- ບັນດາເຈົ້າແຂວງ 01 ສະບັບ (ເພື່ອຊາບ)
- ກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ (ເພື່ອຊາບ)
- ກະຊວງປ້ອງກັນຄວາມສະຫງົບ 01 ສະບັບ (ເພື່ອຊາບ)
- ພະແນກການເງິນນະຄອນຫຼວງ, ບັນດາແຂວງ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ຫ້ອງການກະຊວງການເງິນ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມພາສີ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)
- ກົມຂົນສົ່ງ 01 ສະບັບ (ເພື່ອຈັດຕັ້ງປະຕິບັດ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ 03492 /ກພສ

ນະຄອນຫຼວງວຽງຈັນ, ວັນທີ 03 JUL 2018

## ສະໂນດນຳສົ່ງ

ເຖິງ: - ຫົວໜ້າພະແນກອ້ອມຂ້າງກົມພາສີ.

- ຫົວໜ້າກອງຄຸ້ມຄອງພາສີໃນຂອບເຂດທົ່ວປະເທດ.

ເລື່ອງ: ນຳສົ່ງເອກະສານ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ: 2826/ກງ, ລົງວັນທີ: 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;

ເອກະສານຄັດຕິດມາພ້ອມນີ້:

| ລ/ດ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | ແຈ້ງການກະຊວງການເງິນ ສະບັບເລກທີ 1984/ກງ, ລົງວັນທີ 27/06/2018 ກ່ຽວກັບການແກ້ໄຂຄະດີລັກລອບນຳເຂົ້າໜີພາສີ | 1 ສະບັບ | 1.ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ; 2.ມອບໃຫ້ກອງຄຸ້ມຄອງພາສີໃນຂອບເຂດທົ່ວປະເທດເປັນເຈົ້າການສັງລວມ ສະຖິຕິການແກ້ໄຂຄະດີລັກລອບນຳເຂົ້າໜີພາສີ ເພື່ອລາຍງານມາຍັງກົມພາສີ (ພະແນກຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ) ເປັນແຕ່ລະໄລຍະ. |
| | | 1 ສະບັບ | |

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ